ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 652/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 12 ກໍລະກົດ 2023

# ຂໍ້ຕົກລົງ
# ວ່າດ້ວຍຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ການຄົ້ນຄວ້າຂອງກົມບໍລິການທະນາຄານ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ເພື່ອເຮັດໃຫ້ຕະຫຼາດດັ່ງກ່າວເປັນບ່ອນດັດສົມເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.

**ມາດຕາ 2 ຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ**

ຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນຕະຫຼາດທີ່ທະນາຄານທຸລະກິດດຳເນີນທຸລະກຳຊື້ ຂາຍເງິນຕາຕ່າງປະເທດດ້ວຍກັນ ໂດຍຜ່ານລະບົບຊື້ ຂາຍເງິນຕາ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ເປັນສະມາຊິກຂອງຕະຫຼາດລະຫວ່າງທະນາຄານ;

2. **ເງິນຕາຕ່າງປະເທດ** ໝາຍເຖິງ ເງິນຕາສະກຸນອື່ນທີ່ຮັບຮູ້ ແລະ ນຳໃຊ້ຢ່າງເປັນທາງການຕາມກົດໝາຍຂອງເຂດປົກຄອງ, ປະເທດ ແລະ ພາກພື້ນ ທີ່ກ່ຽວຂ້ອງ;

3. **ລະບົບຊື້ ຂາຍເງິນຕາ** ໝາຍເຖິງ ລະບົບທີ່ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະ ໃຫ້ບໍລິການດຳເນີນທຸລະກຳ ຊື້ ຂາຍ ເງິນຕາຕ່າງປະເທດ ເຊັ່ນ ລະບົບ Interbank ຫຼື ລະບົບອື່ນ.

**ມາດຕາ 4 ຫຼັກການການເຄື່ອນໄຫວຂອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ**

ການເຄື່ອນໄຫວຂອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ກຳນົດອັດຕາແລກປ່ຽນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;
2. ປະຕິບັດຫຼັກການບັນຊີ ແລະ ການລາຍງານ ໂດຍສອດຄ່ອງກັບລະບຽບການກ່ຽວຂ້ອງ;
3. ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບທະນາຄານທຸລະກິດ ທີ່ກ່ຽວຂ້ອງກັບການຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ.

## ໝວດທີ 2
## ການເຄື່ອນໄຫວຕະຫຼາດ
## ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ

**ມາດຕາ 6 ເງື່ອນໄຂການເຂົ້າຮ່ວມຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ**

ທະນາຄານທຸລະກິດ ທີ່ເຂົ້າຮ່ວມຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນສະມາຊິກຂອງລະບົບການຊຳລະ ແລະ ຫັກບັນຊີຂອງ ສປປ ລາວ;
2. ມີລະບຽບການພາຍໃນກ່ຽວກັບການດຳເນີນທຸລະກຳ ແລະ ການບໍລິຫານຄວາມສ່ຽງ ໃນການຊື້ ຂາຍເງິນຕາຕ່າງປະເທດ ທີ່ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ;
3. ມີຜູ້ດຳເນີນທຸລະກຳ ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ສາມາດເຊື່ອມຕໍ່ກັບລະບົບຊື້ ຂາຍ ເງິນຕາ;
4. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ພາກສ່ວນອື່ນ ທີ່ມີຈຸດປະສົງດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຈຶ່ງສາມາດດຳເນີນການໄດ້ ຊຶ່ງຕ້ອງດຳເນີນຜ່ານທະນາຄານທຸລະກິດທີ່ເປັນສະມາຊິກຕະຫຼາດດັ່ງກ່າວເທົ່ານັ້ນ.

ມາດຕາ 7 ປະເພດທຸລະກຳ

ປະເພດທຸລະກຳຊື້ ຂາຍເງິນຕາຕ່າງປະເທດ ປະກອບດ້ວຍ:

1. ການຊື້ ຂາຍເງິນຕາຕ່າງປະເທດແບບທັນທີ (FX Spot);
2. ສັນຍາຊື້ ຂາຍເງິນຕາຕ່າງປະເທດແບບລ່ວງໜ້າ (FX Forward);
3. ສັນຍາຊື້ ຂາຍຝາກເງິນຕາຕ່າງປະເທດ (FX Swap);
4. ສັນຍາສິດຊື້ ຂາຍເງິນຕາຕ່າງປະເທດ (FX Options).

ການປ້ອງກັນຄວາມສ່ຽງສຳລັບການດຳເນີນທຸລະກຳຂໍ້ 2, 3 ແລະ 4 ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 8 ສະກຸນເງິນ

ສະກຸນເງິນ ທີ່ນຳໃຊ້ໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍ ໂດລາສະຫະລັດ, ບາດ, ຢວນ ຫຼື ສະກຸນເງິນຂອງປະເທດໃດໜຶ່ງທີ່ເປັນຄູ່ຄ້າຂອງ ສປປ ລາວ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ການດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຕ້ອງດຳເນີນການຊື້ ຂາຍ ຜ່ານສະກຸນເງິນກີບ.

ມາດຕາ 9 ການສະເໜີອັດຕາຊື້ ຂາຍເງິນຕາຕ່າງປະເທດ

ທະນາຄານທຸລະກິດ ທີ່ເຄື່ອນໄຫວໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຕ້ອງສະເໜີອັດຕາຊື້ ຂາຍເງິນຕາຕ່າງປະເທດ ຕາມແຈ້ງການຂອງກົມບໍລິການທະນາຄານ ກຳນົດອອກໃນແຕ່ລະໄລຍະ.

ມາດຕາ 10 ເວລາເປີດ-ປິດຕະຫຼາດ ຊື້ ຂາຍ ເງິນຕາລະຫວ່າງທະນາຄານ

ຕະຫຼາດ ຊື້ ຂາຍ ເງິນຕາລະຫວ່າງທະນາຄານ ເປີດດຳເນີນທຸລະກຳ ແຕ່ເວລາ 9:00 ໂມງ ແລະ ປິດໃນເວລາ 15:30 ໂມງ ຂອງວັນລັດຖະການ.

ມາດຕາ 11 ການຊຳລະທຸລະກຳ

ການຊຳລະທຸລະກຳຊື້ ຂາຍເງິນຕາຕ່າງປະເທດ ຕ້ອງດຳເນີນຜ່ານລະບົບການຊຳລະ ແລະ ຫັກບັນຊີຂອງ ສປປ ລາວ ໂດຍປະຕິບັດ ດັ່ງນີ້:

1. ການຊື້ ຂາຍເງິນຕາຕ່າງປະເທດແບບທັນທີ ຕ້ອງຊຳລະໃນວັນທີ່ດຳເນີນທຸລະກຳ;
2. ສັນຍາຊື້ ຂາຍເງິນຕາຕ່າງປະເທດແບບລ່ວງໜ້າ, ສັນຍາຊື້ ຂາຍ ຝາກເງິນຕາຕ່າງປະເທດ ແລະ ສັນຍາສິດຊື້ ຂາຍ ເງິນຕາຕ່າງປະເທດ ຕ້ອງຊຳລະໃນວັນທີ່ກຳນົດໃນສັນຍາ.

ກໍລະນີວັນທີ່ຊຳລະ ກົງກັບວັນພັກລັດຖະການ ໃຫ້ຖືເອົາວັນລັດຖະການຖັດໄປເປັນວັນທີ່ຊຳລະ.

ມາດຕາ 12 ການບັນທຶກບັນຊີ

ການດຳເນີນທຸລະກຳຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ ຕ້ອງມີການບັນທຶກບັນຊີ ເພື່ອຕິດຕາມການຊື້ ຂາຍເງິນຕາຕ່າງປະເທດ ໂດຍຜ່ານບັນຊີຖານະ ແລະ ຄູ່ມູນຄ່າຖານະ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 13 ຜູ້ດຳເນີນທຸລະກຳ**

ຜູ້ດຳເນີນທຸລະກຳ ແມ່ນພະນັກງານທີ່ໄດ້ຮັບການມອບສິດ ຈາກທະນາຄານທຸລະກິດໃຫ້ເປັນຜູ້ຕາງໜ້າໃນການ ຕິດຕໍ່, ຕົກລົງ, ຢັ້ງຢືນ ແລະ ອະນຸມັດ ການດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງ ປະເທດລະຫວ່າງທະນາຄານ.

ທະນາຄານທຸລະກິດ ຕ້ອງແຈ້ງລາຍຊື່ຜູ້ດຳເນີນທຸລະກຳ ໃຫ້ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນທີ່ໄດ້ເປັນສະມາຊິກຕະຫຼາດລະຫວ່າງທະນາຄານ.

ກົມບໍລິການທະນາຄານ ຈະແຈ້ງລາຍຊື່ຜູ້ດຳເນີນທຸລະກຳໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດ ຮັບຊາບ.

## ໝວດທີ 3
## ການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງເທດລະຫວ່າງທະນາຄານ

**ມາດຕາ 14 ການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ**

ກົມບໍລິການທະນາຄານ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ໃນການປະສານສົມທົບກັບກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບຊຳລະສະສາງ ແລະ ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງຕະຫຼາດຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງກົມບໍລິການທະນາຄານ**

ໃນການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ກົມບໍລິການທະນາຄານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດລະບຽບການ ແລະ ນະໂຍບາຍການດຳເນີນງານຕ່າງໆ ຂອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ;

2. ເຂົ້າຮ່ວມດຳເນີນການຊື້ ຂາຍເງິນຕາຕ່າງປະເທດໃນຕະຫຼາດຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຕາມເງື່ອນໄຂນະໂຍບາຍບາຍເງິນຕາ;

3. ຕິດຕາມ ກວດກາ ການເຄື່ອນໄຫວດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຜ່ານການລາຍງານ, ລະບົບຊື້ ຂາຍເງິນຕາ, ລະບົບການຊຳລະ ແລະ ຫັກບັນຊີຂອງ ສປປ ລາວ;

4. ເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນການລາຍງານ ກ່ຽວກັບການດຳເນີນທຸລະກຳໃນຕະຫຼາດຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ ປະຈຳວັນ;

5. ນຳໃຊ້ມາດຕະການ ຕໍ່ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້;

6. ລາຍງານສະພາບການເຄື່ອນໄຫວຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານໃຫ້ ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບຊຳລະສະສາງ ແລະ ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

7. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງລະບົບການຊຳລະ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງກົມນະໂຍບາຍເງິນຕາ**

ໃນການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ກົມນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມການດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຜ່ານລະບົບຊື້ ຂາຍເງິນຕາ ແລະ ການລາຍງານຂອງທະນາຄານທຸລະກິດ;

2. ຄົ້ນຄວ້າ, ວິເຄາະ, ກຳນົດ ແລະ ແຈ້ງອັດຕາແລກປ່ຽນອ້າງອີງປະຈຳວັນ ໃຫ້ທະນາຄານທຸລະກິດ ເປັນບ່ອນອີງໃນການດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ໃຫ້ສອດຄ່ອງໃນແຕ່ລະໄລຍະ;

3. ສະຫຼຸບ ແລະ ປະເມີນສະພາບການກຳນົດອັດຕາແລກປ່ຽນ ການຊື້ ຂາຍເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ເພື່ອລາຍງານຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມບໍລິການທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງລະບົບຊຳລະສະສາງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ໃນການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດຕົວຊີ້ວັດລະດັບຖານະເງິນຕາຕ່າງປະເທດ ແລະ ສະພາບຄ່ອງຂອງທະນາຄານທຸລະກິດ;

2. ຕິດຕາມ ກວດກາ ການດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ຜ່ານບັນຊີຊື້ ຂາຍເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ແລະ ລາຍງານໃຫ້ກົມບໍລິການທະນາຄານ ຢ່າງເປັນປົກກະຕິ;

3. ເກັບກຳ, ສັງລວມ, ວິເຄາະຂໍ້ມູນ ແລະ ລາຍງານການຈັດຕັ້ງປະຕິບັດລະດັບຖານະເງິນຕາຕ່າງປະເທດ ແລະ ສະພາບຄ່ອງຂອງທະນາຄານທຸລະກິດ ໃຫ້ກົມບໍລິການທະນາຄານ ເປັນປະຈຳວັນ;

4. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດລະບຽບການຮັກສາລະດັບຖານະເງິນຕາຕ່າງປະເທດ ແລະ ສະພາບຄ່ອງຂອງທະນາຄານທຸລະກິດ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

5. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມບໍລິການທະນາຄານ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງລະບົບການຊຳລະ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງລະບົບຊຳລະສະສາງ**

ໃນການຄຸ້ມຄອງຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ກົມຄຸ້ມຄອງລະບົບຊຳລະສະສາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ ກວດກາ ແລະ ພິຈາລະນາ ການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ແລະ ລະບົບຊຳລະອື່ນ ຂອງທະນາຄານທຸລະກິດ ທີ່ຕິດພັນກັບການເຄື່ອນໄຫວຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ;

2. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນການຊຳລະທຸລະກຳຂອງທະນາຄານທຸລະກິດ ຜ່ານລະບົບຊຳລະ ແລະ ຫັກບັນຊີຂອງ ສປປ ລາວ;

3. ສະຫຼຸບ, ປະເມີນ ແລະ ລາຍງານ ສະພາບການນຳໃຊ້ລະບົບຊຳລະ ແລະ ຫັກບັນຊີຂອງ ສປປ ລາວ ແລະ ການຊຳລະທຸລະກຳຂອງທະນາຄານທຸລະກິດ ເພື່ອລາຍງານຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມບໍລິການທະນາຄານ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງທະນາຄານທຸລະກິດ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 19 ຂໍ້ຫ້າມ

ຫ້າມທະນາຄານທຸລະກິດ ທີ່ດຳເນີນທຸລະກຳໃນຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກຳຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ ນອກລະບົບທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

2. ກຳນົດອັດຕາແລກປ່ຽນຊື້ ຂາຍເງິນຕາຕ່າງປະເທດ ເກີນຂອບທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

3. ສ້າງຄວາມປັ່ນປ່ວນຕໍ່ຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ໂດຍການດຳເນີນທຸລະກຳທີ່ບໍ່ສອດຄ່ອງກັບຕົວຈິງ;

4. ຊຳລະທຸລະກຳຊື້ ຂາຍເງິນຕາຕ່າງປະເທດ ບໍ່ຄົບຖ້ວນ, ບໍ່ສອດຄ່ອງກັບບັນຊີ ແລະ/ຫຼື ບໍ່ບັນທຶກບັນຊີ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ

ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນຢ່າງເປັນລາຍລັກອັກສອນ ພ້ອມທັງໃຫ້ປັບປຸງແກ້ໄຂ ພາຍໃນເວລາ ຫ້າ ວັນ ໃຫ້ສອດຄ່ອງກັບລະບຽບການ, ຖ້າເກີນກຳນົດເວລາດັ່ງກ່າວ ຫຼື ມີການລະເມີດຊ້ຳ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ເຜີຍແຜ່ການລະເມີດລະບຽບການ ຜ່ານສື່ມວນຊົນ ແລະ ປັບໃໝ 10.000.000 (ສິບລ້ານ) ກີບ ຕໍ່ວັນ;

2. ຢຸດການດຳເນີນຊື້ ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ ຈົນກວ່າຈະປັບປຸງ ແລະ ແກ້ໄຂໃຫ້ສອດຄ່ອງກັບລະບຽບການ.

ກໍລະນີ ທະນາຄານທຸລະກິດຍັງສືບຕໍ່ລະເມີດ ແລະ ສ້າງຜົນກະທົບທີ່ຮ້າຍແຮງ ຊຶ່ງເຮັດໃຫ້ທະນາຄານທຸລະກິດນັ້ນ ຕົກຢູ່ໃນພາວະວິກິດ ຫຼື ສ້າງຄວາມເສຍຫາຍຮ້າຍແຮງໃຫ້ແກ່ລະບົບທະນາຄານ ແລະ ລະບຽບຄວາມໝັ້ນຄົງ ທະນາຄານທຸລະກິດດັ່ງກ່າວ ຈະຖືກປະຕິບັດມາດຕະການອື່ນຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກົມບໍລິການທະນາຄານ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບຊໍາລະສະສາງ, ທະນາຄານທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ສະບັບເລກທີ 1077/ທຫລ, ລົງວັນທີ 08 ທັນວາ 2016.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ບຸນເຫຼືອ ສິນໄຊວໍຣະວົງ